**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື ເລກທີ ໑໗ /ຈຂ.ອປ

ອັດຕະປື,ວັນທີ ໑໑ ກໍລະກົດ 2018

## ຄໍາສັ່ງແນະນໍາ

**ເຖິງ :** -ບັນດາພະແນກການ,ກົມກອງ ແລະ ອົງການທຽບເທົ່າຂັ້ນຕ່າງໆອ້ອມຂ້າງແຂວງ ແລະ ເມືອງ.

-ບັນດາຫົວໜ່ວຍທຸລະກິດ ບຸກຄົນ, ນິຕິບຸກຄົນ ຫລື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດໍາເນີນທຸລະກິດ ຢູ່ ແຂວງອັດຕະປື.

**ເລື່ອງ:** ການຈົດທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV,ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ,ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ,ລົງວັນທີ 23 ມັງກອນ 2006 ວ່າດ້ວຍ ໃບເກັບເງິນ.

ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ຊຸກຍູ້ສົ່ງເສີມການຜະລິດສິນຄ້າ ແລະການບໍລິການ, ການລົງທຶນ ແລະການສົ່ງອອກ ແນ່ໃສ່ເຮັດ ໃຫ້ທຸກພາກສ່ວນຫົວໜ່ວຍທຸລະກິດ ໄດ້ມີການເຄື່ອນໄຫວຢ່າງຖືກຕ້ອງ,ສອດຄ່ອງ ກັບ ລະບຽບກົດໝາຍ ແລະ ປະກອບສ່ວນມອບພັນທະຢ່າງຕັ້ງໜ້າຕາມການເຄື່ອນໄຫວທຸລະກິດຕົວຈິງຂອງຕົນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ເວົ້າລວມ, ເວົ້າສະເພາະຂອງແຂວງອັດຕະປື ຮັບປະກັນການສ້າງລາຍຮັບໃຫ້ແກ່ງົບປະມານດ້ວຍການບຸກທະລຸ ຕາມທິດທາງແຜນການທີ່ວາງໄວ້ ໃນສະເພາະໜ້າ ແລະ ຍາວນານ.

### ເຈົ້າແຂວງອັດຕະປື ອອກຄໍາສັ່ງແນະນໍາ :

1. ໃຫ້ບັນດາຫົວໜ່ວຍທຸລະກິດ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວດໍາເນີນທຸລະກິດຢູ່ພາຍໃນແຂວງອັດຕະປື ແລະ ມີລາຍຮັບທຸລະກິດປະຈໍາປີ ແຕ່ 400 ລ້ານກີບ(ສີ່ຮ້ອຍລ້ານກີບ) ຂຶ້ນໄປ ແຕ່ຍັງບໍ່ທັນໄດ້ຈົດທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ, ລວມທັງຜູ້ບໍ່ມີພູມລໍາເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ ມາເຄື່ອນໄຫວມີລາຍໄດ້ ຢູ່ ພາຍໃນແຂວງອັດຕະປື ໃຫ້ມາຈົດທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ ແລະ ຈັດຕັ້ງປະຕິບັດຕາມລະບຽບກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ໂດຍໃຫ້ນໍາໃຊ້ໃບເກັບເງິນອາກອນມູນຄ່າເພີ່ມ,ຖືບັນຊີຕາມລະບຽບການບັນຊີ ແລະ ເປັນເປົ້າໝາຍຜູ້ມອບອາກອນມູນຄ່າເພີ່ມ ຕາມລະບຽບກົດໝາຍໄດ້ກໍານົດໄວ້;

2. ບັນດາຫົວໜ່ວຍທຸລະກິດ ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວທຸລະກິດ ແລະມີລາຍໄດ້ຢູ່ພາຍໃນແຂວງອັດຕະປື ຕ້ອງໄດ້ນຳໃຊ້ໃບເກັບເງິນ ທີ່ຖືກຕ້ອງ (ໃບເກັບເງິນ ທີ່ກະຊວງການເງິນ ພິມຈຳໜ່າຍ ຫລື ອະນຸຍາດໃຫ້ນຳໃຊ້) ເພື່ອເປັນເອກະສານຢັ້ງຢືນໃນການຈັດຊື້-ຈັດຈ້າງ,ການຊື້-ຂາຍ ແລະ ການເຄື່ອນຍ້າຍສິນຄ້າ, ການລົງບັນຊີລາຍຮັບ-ລາຍຈ່າຍ, ການແຈ້ງ-ມອບອາກອນ, ການຂໍຫັກ ແລະ ການຂໍຄືນເງິນອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ຂອງຜູ້ດຳເນີນທຸລະກິດ ແລະ ນຳໃຊ້ເປັນເອກະສານປະກອບ ໃນການສະເໜີຂໍອະນຸມັດລາຍຈ່າຍຜ່ານງົບປະມານ ໃຫ້ມີຄວາມຖືກຕ້ອງ,ສອດຄ່ອງ ກັບ ລະບຽບການໄດ້ກຳນົດໄວ້;

- ບໍ່ອະນຸຍາດໃຫ້ບັນດາຫົວໜ່ວຍທຸລະກິດ ຫລື ຜູ້ປະກອບການ ແລະ ການຈັດຕັ້ງ ຈຳໜ່າຍ ແລະ ນາໃຊ້ໃບເກັບເງິນ ທີ່ບໍ່ຖືກຕ້ອງ (ໃບເກັບເງິນປອມ ຫລື ໃບເກັບເງິນ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຈັດພິມ ຫລື ນຳໃຊ້ ຈາກກະຊວງການເງິນ) ຢ່າງເດັດຂາດ;

3. ມອບໃຫ້ ສ່ວຍສາອາກອນປະຈຳແຂວງ ປະຕິບັດດັ່ງນີ້:

   3.1 ແຕ່ງຕັ້ງໜ່ວຍງານປະຊາສຳພັນ ເພື່ອຮຽກເຊີນເອົາບັນດາຫົວໜ່ວຍທຸລະກິດ ເປົ້າໝາຍຕາມທີ່ໄດ້ກຳນົດໄວ້ ຢູ່ໃນຂໍ້ 1 ຂອງ ຄຳສັ່ງແນະນຳສະບັບນີ້ ເພື່ອຊຸກຍູ້,ແນະນຳນະໂຍບາຍດ້ານຕ່າງໆ ກ່ຽວກັບການເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃຫ້ລະອຽດ,ຈະແຈ້ງ;

   3.2 ຄຸ້ມຄອງ,ຕິດຕາມ ບັນດາຫົວໜ່ວຍທຸລະກິດ ທີ່ເສຍອາກອນແບບມອບເໝົາ ດ້ວຍການຄັດເລືອກເປົ້າໝາຍ ແລະ ແນະນຳໃຫ້ ນຳໃຊ້ໃບເກັບເງິນແບບປະຖົມພື້ນຖານ ເປັນເອກະສານໃນການຢັ້ງຢືນການຊື້-ຂາຍ ແລະ ເປັນຂໍ້ມູນດ້ານລາຍຮັບ ຂອງ ຫົວໜ່ວຍທຸລະກິດດັ່ງກ່າວ ເພື່ອຫັນເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃນຂັ້ນຕໍ່ໄປ;

   3.3 ເພີ່ມທະວີເອົາໃສ່ໃນການກວດກາ ການຊື້-ຂາຍ, ການເຄື່ອນຍ້າຍສິນຄ້າ ເຂົ້າສາງ-ອອກສາງ,ຫ້າງຮ້ານ ແລະ ຕາມຈຸດເປົ້າໝາຍ ຫລື ສະຖານທີ່ຕ່າງໆ ທີ່ພົວພັນກັບການນຳໃຊ້ໃບເກັບເງິນ ຢ່າງເປັນປົກກະຕິ-ຕໍ່ເນື່ອງ;

   3.4 ດຳເນີນການກວດກາແບບໄວ ແລະ ແບບຄົບຊຸດປະຈຳປີ(ກວດກາຫລັງການແຈ້ງ) ຫລື ເອກະສານລາຍງານການເງິນ ຂອງບັນດາຫົວໜ່ວຍທຸລະກິດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ບົນພື້ນຖານລະບຽບ,ກົດໝາຍໄດ້ກຳນົດໄວ້ຢ່າງເຂັ້ມງວດ;

   3.5 ປະສານສົມທົບ ກັບ ຂະແໜງບັນຊີ(ພະແນກການເງິນແຂວງ) ແລະ ຂະແໜງການກ່ຽວຂ້ອງ ເພື່ອຮ່ວມກັນ ຊຸກຍູ້,ຕິດຕາມ,ກວດກາ ບັນດາຫົວໜ່ວຍທຸລະກິດ ແລະ ການຈັດຕັ້ງ ຕາມພາລະບົດບາດ,ຂອບເຂດສິດຂອງແຕ່ລະພາກສ່ວນ ແນ່ໃສ່ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍ ຂອງວຽກງານອາກອນມູນຄ່າເພີ່ມໄດ້ກຳນົດໄວ້;

   3.6 ກໍລະນີກວດກາພົບເຫັນບັນດາຫົວໜ່ວຍທຸລະກິດ ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງມີການເຄື່ອນໄຫວທີ່ລະເມີດ ກັບຄຳສັ່ງແນະນຳສະບັບນີ້ ແມ່ນໃຫ້ປະຕິບັດຕາມມາດຕະການ ທີ່ໄດ້ລະບຸໄວ້ ຢູ່ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ດຳລັດວ່າດ້ວຍໃບເກັບເງິນ ຫລື ລະບຽບການອື່ນໆທີ່ຂຶ້ນກັບການຄຸ້ມຄອງ ຕາມແຕ່ລະກໍລະນີຢ່າງເຂັ້ມງວດ;

4. ມອບໃຫ້ພະແນກການເງິນແຂວງ ອອກຄຳແນະນຳເປັນອັນລະອຽດ ກ່ຽວກັບການຈັດງຕັ້ງປະຕິບັດວຽກງານດັ່ງກ່າວ ແນ່ໃສ່ໃຫ້ມີຄວາມເປັນເອກະພາບທາງດ້ານວິຊາການ ແລະເປັນເຈົ້າການໃນຊີ້ນຳ,

ຕິດຕາມ, ກວດກາ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ທ່ານເຈົ້າແຂວງຊາບເປັນແຕ່ລະໄລຍະ;

5. ຄໍາສັ່ງແນະນໍາສະບັບນີ້ມີຜົນສັກສິດບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ເລັດ ໄຊຍະພອນ